ກະຊວງອຸດສາຫະກຳ ແລະ ການຄ້າ
ສະຖາບັນ ອຸດສາຫະກຳ ແລະ ການຄ້າ

ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

# ຜົນກະທົບຂອງ Covid-19 ຕໍ່ການຂະຫຍາຍໂຕຂອງການຄ້າເອເລັກໂຕຣນິກ ໃນ ສປປ ລາວ: ກໍລະນີສຶກສາ ການສັ່ງຊື້ສິນຄ້າຈາກປະເທດໄທ ແລະ ສປ ຈີນ ຢູ່ນະຄອນຫຼວງວຽງຈັນ

**ມັງກອນ, 2021**

## ບົດສະຫຼຸບຫຍໍ້

ກ່ອນການແຜ່ລະບາດຂອງພະຍາດ ໂຄວິດ-19, ການຄ້າຮູບແບບອອນລາຍ ຫຼື ການຄ້າເອເລັກໂຕຣນິກ ແມ່ນໄດ້ມີບົດບາດສຳຄັນ ເປັນທ່າແຮງໃຫ້ວິສາຫະກິດຕ່າງໆ ໃນການຮ່ວມມືປະສານງານເຊິ່ງກັນ ແລະ ກັນ, ບໍ່ວ່າຈະເປັນທາງພາກລັດ, ຜູ້ບໍລິໂພກ ຫຼື ຜູ້ຊົມໃຊ້. ສຳລັບປະເທດກຳລັງພັດທະນາຄືປະເທດລາວ, ການຄ້າເອເລັກໂຕຣນິກກໍ່ເປັນທ່າແຮງໃນການພັດທະນາເສດຖະກິດ ແລະ ສາມາດປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ເຊັ່ນການຜັນຕົນເອງມາເປັນຜູ້ຂາຍສິນຄ້າອອນລາຍ, ຜູ້ຮັບສັ່ງສິນຄ້າ, ຜູ້ສົ່ງສິນຄ້າ, ແລະ ອື່ນໆ. ດັ່ງນັ້ນ, ການສຶກສາຄັ້ງນີ້ຈິ່ງມີຈຸດປະສົງເພື່ອຍົກໃຫ້ເຫັນບົດບາດຄວາມສຳຄັນໃນການນຳໃຊ້ການຄ້າເອເລັກໂຕຣນິກເມື່ອເກີດການແຜ່ລະບາດຂອງພະຍາດໂຄວິດ-19 ໂດຍການວິເຄາະແນວໂນ້ມການຂະຫຍາຍຕົວການຄ້າເອເລັກໂຕຣນິກ, ບັນຫາ ແລະ ອຸປະສັກ ທີ່ຕິດພັນກັບລະບົບພື້ນຖານໂຄງລ່າງ, ຮູບການຊື້-ຂາຍ, ແລະ ລະບົບການຊຳລະເງິນ.

ບົດຄົ້ນຄວ້ານີ້ໄດ້ນຳໃຊ້ການສຶກສາແບບຄຸນນະພາບ (Qualitative) ໂດຍການສຳພາດເອົາຂໍ້ມູນຈາກຜູ້ທີ່ມີສ່ວນຮ່ວມໃນລະບົບການຄ້າເອເລັກໂຕຼນິກ ເຊັ່ນ: ຜູ້ຊື້, ບໍລິສັດຂົນສົ່ງ, ຜູ້ບໍລິການໂອນເງິນ/ ຮ້ານແລກປ່ຽນ ແລະ ຜູ້ໃຫ້ບໍລິການສັ່ງເຄື່ອງລ່ວງໜ້າ ໂດຍເລືອກສຳຫຼວດຢູ່ນະຄອນຫຼວງວຽງຈັນເປັນສະຖານທີ່ສຶກສາ. ດັ່ງນັ້ນ, ຜູ້ຖືກສຳພາດປະກອບມີທັງຄົນລາວ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບການຊື້-ຂາຍອອນລາຍຢູ່ຕະຫຼາດພາຍໃນ ແລະ ຕ່າງປະເທດໂດຍເນັ້ນໃສ່ການຊື້-ຂາຍອອນລາຍກັບປະເທດໄທ ແລະ ສປ ຈີນ ເປັນກໍລະນີສຶກສາ.

ຜົນການສຶກສາໄດ້ສະແດງໃຫ້ເຫັນວ່າໂຄວິດ-19ເຮັດໃຫ້ກິດຈະກຳການຄ້າເອເລັກໂຕຣນິກທັງພາຍໃນ ແລະ ຕ່າງປະເທດຂະຫຍາຍຕົວເພີ່ມຂຶ້ນ ແຕ່ກໍຍັງພົບວ່າ ລະບົບການຂົນສົ່ງທັງພາຍໃນ ແລະ ຕ່າງປະເທດ, ລະບົບການເຊື່ອມຕໍ່ອິນເຕີເນັດ, ແລະ ຄວາມຕ້ອງການທີ່ຈະເປີດບັນຊີກັບສະຖາບັນການເງິນຍັງເປັນອຸປະສັກທີ່ພາໃຫ້ຈຳກັດການຂະຫຍາຍໂຕຂອງການຄ້າເອເລັກໂຕຣນິກໃນ ສປປ ລາວ. ນອກຈາກນັ້ນ ຮູບແບບການຊື້-ຂາຍສິນຄ້າຍັງເປັນຮູບການປະຖົມປະຖານໂດຍອີງໃສ່ສື່ອອນໄລ (Social media) ເປັນຫລັກໄດ້ແກ່ Facebook, Instagram, WhatsApp ແລະ ອື່ນໆ ຂາດກົນໄກການປົກປ້ອງຂໍ້ຂັດແຍ່ງຕ່າງໆທີ່ອາດຈະເກີດຂຶ້ນ.

ການພັດທະນາໂຄງລ່າງພື້ນຖານທີ່ສະໜັບສະໜູນເຫັນວ່າມີຄວາມຈຳເປັນ ໂດຍສະເພາະແມ່ນ ລະບົບການສະໜອງອິນເຕີເນັດ, ການບໍລິການໄປສະນີ ແລະ ລະບົບຄົມມະນາຄົມຂົນສົ່ງ. ພັດທະນາລະບົບການຄ້າເອເລັກໂຕຣນິກ ແລະ ນິຕິກຳພາຍໃນເພື່ອສ້າງກົນໄກການແກ້ໄຂບັນຫາທີ່ອາດຈະເກີດຂຶ້ນລະຫວ່າງຜູ້ຊື້ ແລະ ຜູ້ຂາຍ. ສຳລັບການສັ່ງສິນຄ້າທາງເອເລັກໂຕຣນິກຈາກຕ່າງປະເທດ ລັດຖະບານຈຳເປັນຕ້ອງມີລະບຽບການເກັບພາສີສິນຄ້ານຳເຂົ້າຢ່າງເປັນລະບົບເພື່ອສ້າງລາຍຮັບໃຫ້ແກ່ພາກລັດ ແລະ ເປັນການປົກປ້ອງທຸລະກິດພາຍໃນທີ່ນຳເຂົ້າທີ່ຖືກຕ້ອງຕາມລະບຽບຫຼັກການ

ນອກຈາກນີ້, ການຮ່ວມມືໃນການພັດທະນາລະບົບການຄ້າເອເລັກໂຕຣນິກກັບບັນດາປະເທດໃກ້ຄຽງ ເຊັ່ນ: ໄທ, ຈີນ ແລະ ຫວຽດນາມ ທີ່ເປັນຄູ່ຄ້າສຳຄັນຂອງລາວ ແລະ ຂະຫຍາຍໄປບັນດາປະເທດອາຊຽນອື່ນໆ (ASEAN), ໃນກອບຮ່ວມມືກຸ່ມປະເທດອາຊຽນໃໝ່ ກຳປູເຈຍ-ລາວ-ມຽນມາ-ຫວຽດນາມ (CLMV), ຂອບຍຸດທະສາດການຮ່ວມມືດ້ານເສດ ຖະກິດແມ່ນ້ຳອິຣະວະດີ-ແມ່ນ້ຳເຈົ້າພະຍາ-ແມ່ນ້ຳຂອງ (ACMECS), ບັນດາປະເທດລຸ່ມແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ (LMC) ແລະ ອື່ນໆ ແມ່ນເປັນສິ່ງທີ່ຈຳເປັນໃນການຊຸກຍູ້ລະບົບການຄ້າເອເລັກໂຕຣນິກລະຫວ່າງປະເທດ ເພື່ອຮັບປະກັນການແຂ່ງຂັນທີ່ເປັນທຳ, ການເຮັດທຸລະກຳທາງການເງິນທີ່ມີປະສິດທິພາບ ແລະ ການປົກປ້ອງຜູ້ຊົມໃຊ້-ຜູ້ຂາຍ.

# ຜົນກະທົບຂອງ Covid-19 ຕໍ່ການຂະຫຍາຍໂຕຂອງການຄ້າເອເລັກໂຕຣນິກ ໃນ ສປປ ລາວ: ກໍລະນີສຶກສາ ການສັ່ງຊື້ສິນຄ້າຈາກ ປະເທດໄທ ແລະ ສປ ຈີນ ຢູ່ນະຄອນຫຼວງວຽງຈັນ

**ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ**

**ມັງກອນ, 2021**

**ໂດຍ: ປອ ສົມເດດ ໂພທິສານ**

**ພະແນກຄົ້ນຄ້ວານະໂຍບາຍການຄ້າ, ສະຖາບັນ ອຸດສາຫະກຳ ແລະ ການຄ້າ**

somdethx@yahoo.com

**ພາກສະເໜີ**

ການຄ້າເອເລັກໂຕຣນິກແມ່ນລະບົບການຄ້າແບບໃໝ່ທີ່ອີງໃສ່ການປະຕິບັດໃນຮູບແບບ ຊື້ຂາຍສິນຄ້າ ແລະ ການບໍລິການຜ່ານລະບົບດີຈີຕອນ ໃນ ສປປ ລາວ ການຄ້າຮູບແບບດັ່ງກ່າວແມ່ນເລີ່ມຕົ້ນມີການຂະຫຍາຍໂຕ ຍ້ອນມີການພັດທະນາສື່ (ເວັບໄຊ, ເພສ, ແອບພິເຄຊັນ...) ແລະ ຜະລິດຕະພັນຂອງທະນາຄານໃນຮູບແບບໂທລະສັບມືຖື ເຊັ່ນ: BCEL ONE, ST Hub, MJ Saduak ແລະ ແອບພິເຄຊັນອື່ນໆ.

ເຖິງຢ່າງໃດກໍ່ຕາມ ການພັດທະນາລະບົບການຄ້າເອເລັກໂຕຣນິກແມ່ນຍັງຖືວ່າຢູ່ໃນໄລຍະເລີ່ມຕົ້ນ ແລະ ມູນຄ່າຊື້-ຂາຍ ສິນຄ້າຜ່ານລະບົບເອເລັກໂຕຣນິກແມ່ນຍັງບໍ່ຫຼາຍຖ້າທຽບໃສ່ບັນດາປະເທດອ້ອມຂ້າງອື່ນໆ. ການເຊື່ອມຕໍ່ຂັ້ນພື້ນຖານ ຖືວ່າເປັນອຸປະສັກຫຼັກໃນການຄ້າເອເລັກໂຕຣນິກ, ໃນປັດຈຸບັນ ສປປ ລາວຍັງມີຂໍ້ຈຳກັດໃນການເຂົ້າເຖິງ ແລະ ເຊື່ອມຕໍ່ອິນເຕີເນັດ, ເປັນໜຶ່ງປະເທດທີ່ມີຄ່າອິນເຕີເນັດທີ່ສູງ ແລະ ລະບົບຍັງບໍ່ສະຖຽນເມື່ອທຽບກັບບັນດາປະເທດໃນອາຊີຕາເວັນອອກສຽງໃຕ້ (1). ນອກຈາກນີ້, ປະເທດລາວ ຍັງເປັນປະເທດທີ່ຜູ້ຊົມໃຊ້ເບີໂທລະສັບທີ່ລົງທະບຽນໜ້ອຍທີ່ສຸດ (ຕໍ່ 100 ຄົນ) ໃນພາກພື້ນປຽບທຽບກັບປະເທດສະມາຊິກອາຊຽນອື່ນ (2). ກິດຈະກຳການຊື້ຂາຍ ທັງໝົດໃນລາວ ສ່ວນໃຫຍ່ແມ່ນການເຮັດທຸລະ-ກຳແບບຊ່ອງໜ້າ ດ້ວຍການໃຊ້ເງິນສົດ ຫຼື ການແລກປ່ຽນສິນຄ້າໂດຍສະເພາະແມ່ນຢູ່ເຂດຊົນນະບົດ.

ປະເທດລາວມີປະຊາກອນຈຳນວນ 1/3 ທີ່ມີບັນຊີໃນລະບົບທະນາຄານເຊິ່ງຈຳນວນດັ່ງກ່າວສູງກວ່າພຽງແຕ່ປະເທດກຳປູເຈຍ ແລະ ມຽນມາ (3). ເຖິງແມ່ນວ່າມີການເປີດນຳໃຊ້ ແລະ ຫັນມາໃຊ້ແອບພິເຄຊັນທະນາຄານໃນຮູບແບບໂທລະສັບມືຖືຈາກພາກລັດ ແລະ ພາກເອກະຊົນກໍ່ຕາມ, ລາວຍັງມີຂໍ້ຈຳກັດຫຼາຍໃນການນຳໃຊ້ບັນຊີທະນາຄານ ອີງຕາມຂໍ້ມູນທັງໝົດຂອງອາຊຽນລາວແມ່ນດີກວ່າແຕ່ປະເທດມຽນມາເທົ່ານັ້ນ (4). ນອກຈາກນັ້ນ , ສປປ ລາວ ຍັງປະເຊີນໜ້າກັບສິ່ງທ້າທາຍຫຼາຍຢ່າງຕິດພັນກັບການຂົນສົ່ງເຊິ່ງມີບົດບາດສຳຄັນໃນການພັກດັນການຂະຫຍາຍຕົວຂອງການຄ້າເອເລັກໂຕຣນິກ. ການຂົນສົ່ງ ພື້ນຖານແມ່ນອີງໃສ່ ບໍລິສັດຂົນສົ່ງພາກລັດ ແລະ ເອກະຊົນ ເປັນຕົ້ນແມ່ນ ບໍລິສັດ DHL, ໄປສະນີລາວ, ແລະ ບັນດາບໍລິສັດຂົນສົ່ງເອກະຊົນຂະໜາດນ້ອຍທີ່ກຳລັງກໍ່ເກີດຂຶ້ນ. ອີງໃສ່ດັດສະນີປະສິດທິພາບໃນການຂົນສົ່ງ (LPI - Logistic Performance Index ), ສປປ ລາວ ຍັງມີຄ່າ LPI ທີ່ ຈັດຢູ່ໃນປະເພດທີ່ມີປະສິດທິພາບ ແລະ ຄວາມໜ້າເຊື່ອຖືບໍ່ສູງ ເຊິ່ງຢູ່ໃນອັນດັບ ທີ່ 82 ຂອງໂລກ ແລະ ຢູ່ໃນອັນດັບທີ 8 ຂອງອາຊຽນ ໃນການບໍລິການໄປສະນີສາກົນຂອງສະຫະພາບໄປສະນີ (5).

**ຮູບສະແດງທີ 1: ດັດສະນີປະສິດຕະພາບການຂົນສົ່ງ (LPI – Logistic Performance Index[1]) ສົ່ງໃນປະເທດສະມາຊິກອາຊຽນ ປີ 2018.**

| ປະເທດ | ອັນດັບ LPI | ຄະແນນ LPI | ຄວາມໄວໃນການສົ່ງ |
|---|---|---|---|
| ສິງກະໂປ | 7 | 4 | 4.32 |
| ໄທ | 32 | 3.41 | 3.81 |
| ຫວຽດນາມ | 39 | 3.27 | 3.67 |
| ມາເລເຊຍ | 41 | 3.22 | 3.46 |
| ອິນໂດເນເຊຍ | 46 | 3.15 | 3.67 |
| ຟິລິປິນ | 60 | 2.9 | 2.98 |
| ບຣູໄນ | 80 | 2.71 | 3.17 |
| ລາວ | 82 | 2.7 | 2.84 |
| ກຳປູເຈຍ | 98 | 2.58 | 3.16 |
| ມຽນມາ | 137 | 2.3 | 2.91 |

(ແຫຼ່ງຂໍ້ມູນ: World Bank, 2018)

[1] ດັດສະນີປະສິດທິພາບການຂົນສົ່ງ 5 ດີສຸດ ແລະ 1 ອ່ອນ

ກ່ອນການແຜ່ລະບາດພະຍາດຂອງໂຄວິດ-19, ການຄ້າເອເລັກໂຕຣນິກ ແມ່ນໄດ້ມີບົດບາດສຳຄັນອັນເປັນທ່າແຮງໃຫ້ວິສາຫະກິດຕ່າງໆ ໃນການຮ່ວມມືປະສານງານເຊິ່ງກັນ ແລະ ກັນ, ບໍ່ວ່າຈະເປັນທາງພາກລັດ, ຜູ້ບໍລິໂພກ ແລະ/ຫຼື ຜູ້ຊົມໃຊ້. ສຳລັບປະເທດກຳລັງພັດທະນາຄືປະເທດລາວ, ການຄ້າເອເລັກໂຕຣນິກ ເປັນທ່າແຮງທີ່ສຳຄັນຂອງເສດຖະກິດ ແລະ ສາມາດປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ເປັນຕົ້ນແມ່ນການຜັນຕົນເອງມາເປັນຜູ້ຂາຍສິນຄ້າອອນລາຍ, ຜູ້ຮັບສັ່ງສິນຄ້າ, ຜູ້ສົ່ງສິນຄ້າ, ແລະ ອື່ນໆ. ເນື່ອງຈາກມີຕົ້ນທຶນທີ່ບໍ່ສູງທີ່ຈະເຂົ້າເປັນຜູ້ສະໜອງສິນຄ້າໃນລະບົບການຄ້າເອເລັກໂຕຣນິກໄດ້ສ້າງໂອກາດ ແລະ ການແຂ່ງຂັນທີ່ດີໃຫ້ແກ່ຜູ້ເລີ່ມຕົ້ນທຸລະກິດ, ທຸລະກິດຂະໜາດນ້ອຍ ແລະ ທຸກຂະໜາດໃນອະນາຄົດ (UNCTAD, 2016). ຜົນກະທົບຂອງໂຄວິດ-19 ໄດ້ເຮັດໃຫ້ມີນະໂຍບາຍການເວັ້ນໄລຍະຫ່າງ ແລະ ຈຳກັດບາງກິດຈະກຳແບບຊ່ອງໜ້າ. ໃນຫຼາຍປະເທດໃນກຸ່ມປະທດພັດທະນາແລ້ວໄດ້ນຳໃຊ້ມາດຕະການທີ່ເຂັ້ມງວດ ແລະການຈຳກັດຕົນເອງໃນການຮັກສາໄລຍະຫ່າງເພື່ອຫຼຸດຜ່ອນການແຜ່ກະ ຈາຍເຊື້ອດັ່ງນັ້ນເຮັດໃຫ້ການຄ້າຮູບແບບເອເລັກໂຕຣນິກມີການເຕີບໃຫຍ່ຂະຫຍາຍຕົວຫຼາຍ(6).

ການພັດທະນາລະບົບການຊຳລະເງິນເອເລັກໂຕຣນິກ ແລະ ທະນາຄານໃນຮູບແບບມືຖືເຮັດໃຫ້ມີການສັ່ງຊື້ສິນຄ້າທາງອອນລາຍຈາກພາຍໃນ ແລະຕ່າງປະເທດເພີ່ມຂຶ້ນ. ການປັບຕົວຂອງສັງຄົມໃນການສັ່ງຊື້ສິນຄ້າອອນລາຍພາຍໃຕ້ສະພາບການແຜ່ລະບາດໂຄວິດ-19 ແມ່ນເຫັນໄດ້ຈະແຈ້ງ ແຕ່ກໍຍັງມີການສຶກສາບັນຫານີ້ໜ້ອຍຫຼາຍຢູ່ ສປປ ລາວ ໃນໄລຍະຜ່ານມາ; ດັ່ງນັ້ນ, ຜູ້ຂຽນມີຄວາມສົນໃຈສຶກສາຄົ້ນຄ້ວາໃນການປະເມີນຜົນກະທົບຂອງໂຄວິດ-19 ຕໍ່ການຄ້າເອເລັກໂຕຣນິກທີ່ເລີ່ມເຫັນບົດບາດສຳຄັນຫຼາຍຂຶ້ນ ແລະ ເພື່ອຍົກໃຫ້ເຫັນບົດບາດຄວາມສຳຄັນໃນການນຳໃຊ້ການຄ້າເອເລັກໂຕຣນິກເມື່ອເກີດການແຜ່ລະບາດຂອງພະຍາດໂຄວິດ-19 ໂດຍການວິເຄາະແນວໂນ້ມການຂະຫຍາຍຕົວການຄ້າເອເລັກໂຕຣນິກ, ບັນຫາ ແລະ ອຸປະສັກທີ່ຕິດພັນກັບການລະບົບພື້ນຖານໂຄງຮ່າງ, ຮູບການຊື້ຂາຍ, ແລະ ລະບົບການຊຳລະເງິນ. ໂດຍອີງໃສ່ຜົນຂອງການສຶກສານີ້ ເພື່ອສະເໜີແນະດ້ານວິຊາການກ່ຽວກັບນະໂຍບາຍຈຳນວນໜຶ່ງ ໃນການສົ່ງເສີມການຂະ ຫຍາຍໂຕຂອງການຄ້າເອເລັກໂຕຣນິກພາຍໃນ ແລະ ຕ່າງປະເທດ ຫລັງຈາກການລະບາດຂອງພະຍາດ Covid-19.

## ວິທີວິທະຍາ

<u>ຮູບແບບການສຶກສາ</u>

ເພື່ອບັນລຸຈຸດປະສົງຂອງການສຶກສາ, ບົດສຶກສານີ້ໄດ້ນຳໃຊ້ວິທີວິໄຈແບບຄຸນນະພາບ (Qualitative study design). ຊຶ່ງໃຊ້ຈຳນວນຜູ້ເຂົ້າຮ່ວມຕອບແບບສອບຖາມເປັນກຸ່ມຕົວຢ່າງຂະໜາດນ້ອຍແຕ່ເປັນກຸ່ມຕົວຢ່າງທີ່ຊັດເຈນ, ທີ່ມີຄວາມກ່ຽວຂ້ອງ ແລະ ເຊື່ອມໂຍງກັບຂໍ້ມູນຕົວຈິງຢ່າງເລິກເຊິ່ງຫຼາຍກວ່າຂໍ້ມູນທີ່ໄດ້ໃນຮູບແບບປະລິມານ (Quantitative) ທີ່ເນັ້ນຂໍ້ມູນທາງສະຖິຕິເປັນຫຼັກ.

<u>ກຸ່ມຕົວຢ່າງ</u>

ບົດຄົ້ນຄວ້ານີ້ໄດ້ນຳໃຊ້ວິທີການສຳພາດ (Indepth interview) ໂດຍເປັນການຕັ້ງຄຳຖາມແບບເປີດ ແລະ ແນໃສ່ການອະທິບາຍປະສົບການໂຕຈິງຈາກກຸ່ມຜູ້ທີ່ກ່ຽວຂ້ອງກັບການຄ້າເອເລັກໂຕຣນິກໂດຍກົງ, ເຊິ່ງທີມງານຄົ້ນຄວ້າໄດ້ສຳພາດບໍລິສັດຂົນສົ່ງ 3 ບໍລິສັດ, ຮ້ານແລກປ່ຽນເງິນຕາ 2 ຮ້ານ, ຜູ້ໃຫ້ບໍລິການຮັບສັ່ງຊື້ເຄື່ອງ 2 ຮ້ານ, ແລະ ຜູ້ນຳໃຊ້ລະບົບການຄ້າເອເລັກໂຕຣນິກ (ຜູ້ຊື້) 10 ຄົນ. ວິທີນີ້ແມ່ນບໍ່ໄດ້ມີການກຳນົດກຸ່ມຕົວຢ່າງທີ່ແນ່ນອນ, ການເກັບຂໍ້ມູນຖືວ່າສຳເລັດຖ້າເລີ່ມມີຕອບທີ່ຄ້າຍຄືກັນ.

<u>ຂອບເຂດຂອງການສຶກສາ</u>

ຂອບເຂດຂອງການສຶກສານີ້ແມ່ນອີງໃສ່ກຸ່ມຕົວຢ່າງໃນນະຄອນຫຼວງວຽງຈັນເປັນຫຼັກເຊິ່ງຫຼັກການໃນການລວບລວມກຸ່ມຕົວຢ່າງແມ່ນກວມເອົາຜູ້ຕອບແບບສອບຖາມຄືຄົນລາວ ແລະ ຄົນຕ່າງປະເທດ ທີ່ກ່ຽວຂ້ອງກັບການຊື້-ຂາຍອອນລາຍ ແລະ ກິດຈະກຳ ທີ່ຕິດພັນຕ່າງໆ ໂດຍເນັ້ນໃສ່ທັງຕະຫຼາດພາຍໃນ ແລະ ຕ່າງປະເທດ (ອີງໃສ່ກໍລະນີການສັ່ງຊື້ ປະເທດໄທ ແລະ ສປ ຈີນ ທີ່ ເປັນຕະຫຼາດຫຼັກຂອງ ສປປ ລາວ). ໂດຍການເກັບຂໍ້ແມ່ນຢູ່ໃນໄລຍະເດືອນສິງຫາ ຫາ ກັນຍາ, 2021[2]

## ຜົນການສຶກສາ

<u>ກິດຈະກຳທາງການຄ້າເອເລັກໂຕຣນິກໃນລາວ ຫຼັງການລະບາດຂອງພະຍາດ Covid-19</u>

ເພື່ອອຳນວຍຄວາມສະດວກ ແລະ ຕອບສະໜອງການຂະຫຍາຍຕົວຂອງການຄ້າເອເລັກໂຕຣນິກ ສປປ ລາວ ໄດ້ມີນຳໃຊ້ນິຕິກຳທີ່ກ່ຽວຂ້ອງທາງດ້ານການຄ້າ, ການເງິນ ແລະ ອື່ນໆ ໄດ້ແກ່: ກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້, 2010; ກົດໝາຍວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ, 2012; ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ, 2015; ກົດໝາຍວ່າດ້ວຍ ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ, 2016; ກົດໝາຍວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ, 2017; ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ (ສະບັບປັບປຸງ), 2017; ກົດ ໝາຍວ່າດ້ວຍ ລາຍເຊັນເອເລັກໂຕຣນິກ, 2018; ດຳລັດວ່າດ້ວຍ ການຄ້າເອເລັກໂຕຣນິກ, 2021 ແລະ ອື່ນໆ (7)

[2] ເນື່ອງຈາກຂໍ້ຈຳກັດໃນການເກັບຂໍ້ມູນໄລຍະການລະບາດຂອງ Covid -19 ທາງທີມງານຄົ້ນຄ້າໄດ້ນຳໃຊ້ຮູບແບບການປະຊຸມທາງໄກໃນການຊ່ອຍເກັບຂໍ້ມູນສຳລັບບາງຕົວຢ່າງ





ການເຮັດທຸລະກຳທາງດ້ານການເງິນຂອງການຄ້າເອເລັກໂຕຣນິກ ລະຫວ່າງຝ່າຍຜູ້ຊື້ ແລະ ຜູ້ຂາຍ ເກີດຂຶ້ນໃນລະບົບສື່ສັງຄົມອອນລາຍ ທີ່ ໃຊ້ຫຼາຍໃນ ສປປ ລາວ ເຊັ່ນ: Instagram, Facebook, WeChat, WhatsApp ແລະ Line applications. ອີງໃສ່ ພື້ນທີ່ໃນສື່ອອນລາຍດັ່ງກ່າວ, ຍັງບໍ່ທັນມີວິທີການປົກປ້ອງຂໍ້ຂັດແຍ່ງລະຫວ່າງຜູ້ຊື້ ແລະ ຜູ້ຂາຍ ເພາະຍັງບໍ່ທັນມີ ເວັບໄຊທາງການ (Platform) ທີ່ເປັນສ່ວນກາງໃນການພົບກັນລະຫວ່າງຜູ້ຊື້ ແລະ ຜູ້ຂາຍນັບທັງເປັນສ່ວນກາງໃນການແກ້ໄຂບັນຫາທີ່ອາດຈະເກີດຂຶ້ນ.

ກິດຈະກຳການຄ້າເອເລັກໂຕຣນິກໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍສືບເນື່ອງມາຈາກການຈຳກັດການເດີນທາງ, ການວ່າງງານໂດຍພາກການບໍລິການ, ແລະ ປະກົດຕົວຂຶ້ນຂອງບັນດາບໍລິສັດຂົນສົ່ງເອກະຊົນທີ່ມີບົດບາດຫຼາຍຂຶ້ນໄດ້ແກ່ HAL Logistics, Anousith Express, Mixay Express, SCN Express ແລະ ອື່ນໆ ທີ່ໃຫ້ບໍລິການຂົນສົ່ງຂ້າມຄືນ ຈາກແຂວງຕໍ່ແຂວງໃນລາຄາທີ່ສາມາດແຂ່ງຂັນກັນໄດ້. ໃນໄລຍະຂອງການແຜ່ລະບາດ, ການລ໋ອກດາວໄດ້ມີນະໂຍບາຍທີ່ສົ່ງເສີມໃຫ້ເຮັດວຽກຢູ່ເຮືອນ ແລະ ຮັກສາໄລຍະຫ່າງທາງສັງຄົມເພື່ອຢຸດການແຜ່ເຊື້ອໂຄວິດ-19 , ດັ່ງນັ້ນປະຊາຊົນທີ່ອາໃສຢູ່ໃນຕົວເມືອງໃຫຍ່ ເຊັ່ນ: ນະຄອນຫຼວງວຽງຈັນ, ແຂວງສະຫວັນນະເຂດ ແລະ ຈຳປາສັກ ມັກນຳໃຊ້ແອັບພິເຄຊັນໃນມືຖື ເຊັ່ນ: Food Panda, Goteddy ແລະ ອື່ນໆ ໃນການສັ່ງອາຫານ ແລະ ເຄື່ອງໃຊ້. ຂໍ້ມູນທີ່ໄດ້ຮັບຈາກການສຳພາດໄດ້ເຫັນການພັດທະນາ ແລະ ບົດບາດຂອງບໍລິສັດຂົນສົ່ງເອກະຊົນຕໍ່ການຄ້າເອເລັກໂຕຣນິກພາຍໃນເຊັ່ນວ່າ:

*" ...ເມື່ອສອງປີກ່ອນ, ແມ່ນບໍ່ມີຄວາມສະດວກເລີຍໃນການສັ່ງຊື້ສິນຄ້າຈາກແຂວງ. ການບໍລິການໄປສະນີ ຍັງບໍ່ສາມາດນຳໃຊ້ໄດ້ຢ່າງຈິງຈັງ. ສະນັ້ນ, ພວກເຮົາຈຶ່ງຕ້ອງໄດ້ອາໄສການບໍລິການຂົນສົ່ງທາງລົດເມ ຈາກເມືອງປາເຊ ຫາ ນະຄອນຫຼວງວຽງຈັນ. ຊຶ່ງຄ່າຂົນສົ່ງ ແມ່ນຂຶ້ນຢູ່ກັບການຄາດຄະເນບໍ່ມີມາດຕະຖານ..."*

*(ຜູ້ຊື້, ເພດຍິງ 37 ປີ)*

*" ...ການຂົນສົ່ງທາງອາກາດ ແມ່ນມີຄວາມວ່ອງໄວ; ທ່ານສາມາດເດີນທາງໄປເດີນບິນ ແລະ ສົ່ງເຄື່ອງ; ປະມານສອງຊົ່ວໂມງຕໍ່ມາ, ສິນຄ້າກໍຈະຮອດຈຸດໝາຍ. ຢ່າງໃດກໍຕາມ, ລາຄາການຂົນສົ່ງ ແມ່ນສູງ ແລະ ບໍ່ເໝາະກັບທຸລະກິດການຄ້າເອເລັກໂຕຣນິກ. ຄ່າຂົນສົ່ງທາງອາກາດ ມີສອງສ່ວນຄື: ຄ່າຂົນສົ່ງ (ຈ່າຍໂດຍຜູ້ສົ່ງ) ແລະ ຄ່າສາງສິນຄ້າ (ຈ່າຍໂດຍຜູ້ຮັບ)..."*

*(ຜູ້ຊື້, ເພດຍິງ 32 ປີ)*

*" ...ໃນປັດຈຸບັນນີ້ ແມ່ນມີບໍລິສັດຂົນສົ່ງ ຈາກພາກເອກະຊົນຈຳນວນຫຼາຍໃນຕະຫຼາດ, ຊຶ່ງໄດ້ມີການແຂ່ງຂັນກັນສູງ. ພວກເຂົາສະເໜີລາຄາ ແລະ ຈັດສັນເວລາສົ່ງທີ່ເໝາະສົມ. ພຽງໃຊ້ເວລາຂ້າມຄືນໃນການຂົນສົ່ງຈາກແຂວງ ໜຶ່ງໄປແຂວງໜຶ່ງ... "*

*(ຜູ້ຊື້, ເພດຊາຍ 40 ປີ)*

ອີກດ້ານໜຶ່ງ, ຍ້ອນຂໍ້ຈຳກັດໃນການເດີນທາງໄປຕ່າງປະເທດ ຕົວເລກການສັ່ງຊື້ສິນຄ້າຈາກປະເທດອື່ນໆກໍ່ເພີ່ມຂຶ້ນ ແລະ ມີບົດບົດສຳຄັນ ໂດຍສ່ວນໃຫຍ່ແມ່ນມາຈາກປະເທດໄທ ແລະ ສປ ຈີນ. ໃນກໍລະນີການສັ່ງຊື້ສິນຄ້າຈາກໄທ ປະກອບດ້ວຍ 3 ວິທີການຄື:

1. **<u>ການໂອນເງິນເຂົ້າບັນຊີຮ້ານຄ້າໃນປະເທດໄທໂດຍກົງ:</u>** ໃນກໍລະນີນີ້, ຜູ້ຊື້ ແລະ ຜູ້ຂາຍ ຕິດຕໍ່ກັນໂດຍກົງຈາກການນຳໃຊ້ແອັບພິເຄຊັນຂໍ້ຄວາມ ເຊັ່ນ: Facebook Messengers, Lines, WhatsApps ແລະ ອີເມວ. ສຳລັບຜູ້ບໍ່ມີບັນຊີໄທ ສາມາດດຳເນີນການຊຳລະ ໂດຍຮ້ານບໍລິການໂອນເງິນ (ໂດຍປົກກະຕິຈະເປັນໜ້າທີ່ຂອງຮ້ານແລກປ່ຽນເງິນຕາ);
2. **<u>ການຊື້ໂດຍກົງຜ່ານແອັບພິເຄຊັນການຄ້າເອເລັກໂຕຣນິກໃນປະເທດໄທ</u>** ເຊັ່ນ: Shopee ແລະ Lazada ຈັດແບ່ງອອກເປັນສອງຮູບແບບຄື: (1). ລູກຄ້າຄົນລາວ ທີ່ມີບັນຊີທະນາຄານໃນປະເທດໄທ ແມ່ນສາມາດຊື້ສິນຄ້າໂດຍກົງໄດ້ ແລະ (2) ລູກຄ້າຄົນລາວທີ່ບໍ່ມີບັນຊີໄທ ແມ່ນສາມາດໃຊ້ບໍລິການຂອງຜູ້ຮັບສັ່ງຊື້ເຄື່ອງ ແລະ ໜ້າຮ້ານໃນ Facebook;
3. ລູກຄ້າທີ່ເປັນຄົນລາວ **<u>ສາມາດຊື້ສິນຄ້າໂດຍກົງຈາກປະເທດໄທ</u>** ໂດຍການນຳໃຊ້ບັດເຄດິດລາວ ຜ່ານເວບໄຊທາງການຂອງບໍລິສັດ.

ຄົນທີ່ອາໃສໃນ ສປປ ລາວ ສາມາດໃຊ້ບັນຊີທະນາຄານໄທ (ທີ່ລົງທະບຽນໃນປະເທດໄທ) ເພື່ອໂອນເງິນໄປບັນຊີທະນາຄານໄທ ໂດຍນຳໃຊ້ແອັບພິເຄຊັນທະນາຄານເອເລັກໂຕຣນິກ. ເຖິງຢ່າງໃດກໍຕາມ, ຂັ້ນຕອນການຊຳລະຕ້ອງໄດ້ມີການຢັ້ງຢືນ ລະຫັດຜ່ານຄັ້ງດຽວ (OTP), ຊຶ່ງສົ່ງໄປຍັງເລກໂທລະສັບຂອງປະເທດໄທ ເຊິ່ງຍັງພໍມີສັນຍາ ໃນບັນດາເມືອງໃຫຍ່ໆມີທີ່ຕັ້ງຕາມດ່ານຊາຍແດນໄທ ເຊັ່ນ: ນະຄອນຫຼວງວຽງຈັນ-ແຂວງໜອງຄາຍ; ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ-ແຂວງມຸກດາຫານ; ເມືອງທ່າແຂກ, ແຂວງຄຳມ່ວນ-ແຂວງນະຄອນພະນົມ ແລະ ເມືອງໃຫຍ່ໆອື່ນໆ, ບາງພື້ນທີ່ສາມາດຮັບຮອງສັນຍານໂທລະສັບຈາກປະເທດໄທ ແຕ່ສັນຍານອາດບໍ່ສະຖຽນດີ. ບັນຫານີ້ ສາມາດແກ້ໄຂໄດ້ໂດຍການນຳໃຊ້ແອັບພິເຄຊັນທາງມືຖື; ຕົວຢ່າງ: ແອັບຂອງ Dtac Call ທີ່ໃຫ້ສິດສະມາຊິກ/ຜູ້ໃຊ້ໃນການຮັບສາຍ ແລະ ສົ່ງຂໍ້ຄວາມຜ່ານທາງການເຊື່ອມຕໍ່ອິນເຕີເນັດ.





**<u>ຮູບສະແດງທີ 2</u>: ວິທີການສັ່ງຊື້ສິນຄ້າຈາກຕະຫຼາດອອນລາຍໃນປະເທດໄທໂດຍຜູ້ຊື້ໃນລາວ**




(ແຫຼ່ງຂໍ້ມູນ: ການສຶກສາຂອງຜູ້ຂຽນ)

ສໍາລັບຜູ້ໃຊ້ທາງໄປສະນີ, ຜູ້ຊື້ຄົນໃນປະເທດລາວຕ້ອງໄດ້ລົງທະບຽນໃສ່ຊື່ບໍລິສັດຂົນສົ່ງໃນແຂວງໜອງຄາຍ ພ້ອມທັງໃສ່ຊື່ຜູ້ຊື້ ແລະ ເບີໂທລະສັບ. ລາຍການສັ່ງສິນຄ້າ ສາມາດຮັບເອົາຢູ່ບໍລິສັດຂົນສົ່ງທ້ອງຖິ່ນນັ້ນທີ່ຂົນສົ່ງມາຈາກປະເທດໄທຫາລາວ. ຈາກຄວາມຄິດເຫັນຂອງຜູ້ຊົມໃຊ້, ວິທີການຂົນສົ່ງນີ້ແມ່ນຖືກກວ່າ, ມີປະສິດທິພາບ, ແລະ ວ່ອງໄວ (ປະມານ 1-2 ມື້ພາຍຫຼັງສັ່ງ) ເຊິ່ງດີກວ່າການບໍລິການທາງໄປສະນີແບບປົກກະຕິ.

ໃນທຸກວິທີການສັ່ງຊື້, ສິນຄ້າຈະຖືກສົ່ງໄປສະຖານທີ່ຂອງບໍລິສັດຂົນສົ່ງໃນປະເທດໄທ (ແຂວງໜອງຄາຍ) ຈາກນັ້ນ, ສິນຄ້າຈະຖືກສົ່ງຕໍ່ໄປຫາສະຖານທີ່ຂອງບໍລິສັດຂົນສົ່ງໃນປະເທດລາວ. ຜູ້ຊື້/ລູກຄ້າຈະໄດ້ຮັບການແຈ້ງເຕືອນຈາກໂທລະສັບ ເພື່ອໄປຮັບເອົາສິນຄ້າ. ຄ່າຂົນສົ່ງເລີ່ມຕົ້ນ 50 ບາດ (1.5 ໂດລາສະຫະລັດ), ຂຶ້ນຢູ່ກັບນໍ້າໜັກ ແລະ ຂະໜາດຂອງສິນຄ້າ. ບໍລິສັດຂົນສົ່ງໃນປະເທດລາວ ຍັງໃຫ້ບໍລິການສົ່ງອອກ (ຈາກປະເທດລາວໄປ ປະເທດໄທ), ສິນຄ້າຈະຖືກສົ່ງອອກຜ່ານບໍລິສັດຂົນສົ່ງພາຍໃນປະເທດໄທ ເຊັ່ນ: Ninjavan, Kerry express, DHL, J&T express ແລະ ບໍລິສັດຂົນສົ່ງເອກະຊົນ. ເຖິງຢ່າງໃດກໍຕາມ, ຄ່າຂົນສົ່ງໄປໄທ ແມ່ນສູງກວ່າຂາເຂົ້າປະມານ 6 ເທົ່າ. ລາຄາຂັ້ນຕໍ່າເລີ່ມຈາກ 300 ບາດ (9 ໂດລາສະຫະລັດ) - ສໍາລັບຊ່ອງຈົດໝາຍ ຫຼື ກ່ອງສິນຄ້ານ້ອຍ, ລາຄານີ້ ບໍ່ເໝາະສົມໃນການເຮັດທຸລະກິດຂາຍສິນຄ້າ ຈາກ ສປປ ລາວໄປປະເທດໄທ. ຂໍ້ມູນທີ່ໄດ້ຮັບຈາກການສໍາພາດ ໄດ້ສະແດງໃຫ້ເຫັນບາງຄໍາເຫັນຈາກພະນັກ ງານບໍລິສັດຂົນສົ່ງ ລາວໄທ, ຜູ້ຊື້ ແລະ ພະນັກງານຮ້ານແລກປ່ຽນເງິນຕາ ເຊັ່ນ:

*" ...ກ່ອນການແຜ່ລະບາດໂຄວິດ-19, ການເຂົ້າໄປຊື້ສິນຄ້າໃນປະເທດໄທແມ່ນງ່າຍ. ຂ້ອຍຍັງຈື່ໄດ້ດີວ່າໄປຊື້ໂທລະສັບໃໝ່ໃນເມືອງອຸດອນທານີໄດ້ບໍ່ດົນກ່ອນມີການຈໍາກັດການເດີນທາງ. ຕອນນີ້ ຂ້ອຍໄດ້ປ່ຽນວິທີການສັ່ງຊື້ສິນຄ້າຈາກປະເທດໄທ. ໃນຖານະທີ່ເປັນອາດີດນັກຮຽນຢູ່ພຸ້ນ, ຂ້ອຍຍັງມີບັດເດບິດໄທ ແລະ ເບີໂທລະສັບ, ມັນງ່າຍຫຼາຍສໍາລັບຂ້ອຍໃນການໃຊ້ລະບົບການຄ້າເອເລັກໂຕຣນິກໄທ ເຊັ່ນ: Shopee ແລະ Lazada. ມັນກໍຄຸ້ມຄ່າຄືກັນເພາະຄ່າຂົນສົ່ງບໍ່ແພງ (ຊື້ໂທລະສັບໜ່ວຍໜຶ່ງເສຍຄ່າຄົນສົ່ງແຕ່ 50 ບາດ) ແລະ ບໍ່ໄດ້ມີການກວດກາຫຍັງ..."*

*(ຜູ້ຊື້, ເພດຍິງ 37 ປີ)*

*" ...ຫຼັງຈາກການຈໍາກັດການເດີນທາງ, ຜູ້ຄົນບໍ່ສາມາດເດີນທາງໄປປະເທດໄທ. ຫຼາຍໆຄົນໄດ້ສັ່ງຊື້ສິນຄ້າອອນລາຍຈາກໄທ. ດັ່ງນັ້ນ, ປະລິມານສິນຄ້າຈາກໄທ ຈຶ່ງເພີ່ມຂຶ້ນຢ່າງຫຼວງຫຼາຍໃນໄລຍະການແຜ່ລະບາດໂຄວິດ-19. ຜູ້ຄົນສັ່ງຊື້ສິນຄ້າຈາກໄທ ແມ່ນມີຈຸດປະສົງໃນການຄ້າ ແລະ ເພື່ອການຊົມໃຊ້.*

*ໃນກໍລະນີຝາກສິນຄ້າໄປປະເທດໄທ ພວກເຮົາຮັບຝາກຄືກັນ (ສະເພາະຕອນເຊົ້າ) ລາຄາເລີ່ມຕົ້ນ 300 ບາດ ...."*

*(ພະນັກງານບໍລິສັດຂົນສົ່ງ, ເພດຍິງ 30 ປີ)*

*" ...ໃນໄລຍະຂອງການຈໍາກັດການເດີນທາງ, ຄົນຈໍານວນຫຼາຍເຕັມໃຈທີ່ຈະສັ່ງຊື້ເຄື່ອງຈາກປະເທດໄທ, ຊຶ່ງສິນຄ້າຖືກກວ່າສິນຄ້າທີ່ມີໃນປະເທດ. ລູກຄ້າສ່ວນຫຼາຍແມ່ນມີບັນຊີຢູ່ທະນາຄານໄທ. ດັ່ງນັ້ນ, ຫຼາຍຄົນແມ່ນເຂົ້າມາໃຊ້ບໍລິການຂອງພວກເຮົາ..."*

*(ພະນັກງານຮ້ານແລກປ່ຽນເງິນຕາ, ເພດຊາຍ 45 ປີ)*





<u>ຮູບສະແດງທີ 3</u>: ວິທີການສັ່ງຊື້ສິນຄ້າຈາກຕະຫຼາດອອນລາຍໃນ ສປ ຈີນ ໂດຍຜູ້ຊື້ໃນລາວ




(ແຫຼ່ງຂໍ້ມູນ: ການສຶກສາຂອງຜູ້ຂຽນ)

ໃນກໍລະນີສັ່ງສິນຄ້າຈາກ ສປ ຈີນ ກໍ່ຄ້າຍຄືການສັ່ງສິນຄ້າຈາກ ປະເທດໄທ ເຊິ່ງມີທັງການສັ່ງຊື້ເພື່ອມາຊົມໃຊ້ ແລະ ເພື່ອນໍາມາຂາຍຕໍ່ໂດຍລວມແລ້ວວິທີການສັ່ງສິນຄ້າຈາກ ສປ ຈີນ ມີສອງວິທີດັ່ງນີ້:

> 1. <u>ຊື້ສິນຄ້າໂດຍກົງ</u>ໂດຍການນໍາໃຊ້ ບັດເຄດິດ ຫຼື ເດບິດ ຂອງລາວ ກັບບັນດາເວບໄຊ e-commerce ຂອງປະເທດຈີນ;
> 2. ສໍາລັບຜູ້ທີ່ບໍ່ມີບັດເຄດິດສາມາດໃຊ້<u>ບໍລິການຂອງຜູ້ຮັບສັ່ງຊື້ເຄື່ອງ</u> ແລະ ໜ້າຮ້ານໃນ Facebook.

ຜູ້ຊື້ສາມາດສັ່ງຊື້ສິນຄ້າຂອງທະນາຄານລາວ ໂດຍການນໍາໃຊ້ບັດເຄດິດ ຫຼື ເດບິດ. ຄ້າຍຄືກັນກັບການຊື້ສິນຄ້າຈາກລະບົບການຄ້າເອເລັກໂຕຣນິກຂອງໄທ, ຜູ້ຊື້ຕ້ອງໄດ້ໃຫ້ຂໍ້ມູນລາຍລະອຽດຂອງບໍລິສັດຂົນສົ່ງໃນຈີນ ເພື່ອສົ່ງຕໍ່ສິນຄ້າມາ ທາງລາວ, ດ້ວຍວິທີການຂົນສົ່ງທາງລົດ. ຊຶ່ງອັດຕາຄ່າຂົນສົ່ງເລີ່ມຕົ້ນ 9.000 ກີບ/ກິໂລ (0,94 ໂດລາສະຫະລັດ).

ໃນອີກທາງໜຶ່ງ, ລູກຄ້າທີ່ບໍ່ມີບັດເຄດິດ ຫຼື ເດບິດ ສາມາດຊື້ສິນຄ້າ ຫຼື ສັ່ງສິນຄ້າຈາກ ສປ ຈີນ ຈາກເວບໄຊ ທີ່ຮັບສັ່ງສິນຄ້າ ແລະ ໜ້າຮ້ານໃນ Facebook ເຊິ່ງໃຫ້ບໍລິການທີ່ງ່າຍໃນການຊື້ເຄື່ອງສົ່ງ ແລະ ຂາຍຍ່ອຍຈາກລະບົບການຄ້າເອເລັກໂຕຣນິກເຊັ່ນ:Taobao.com,jd.com; 1688.com ແລະ ອື່ນໆ. ໃນກໍລະນີທີ່ໃຊ້ບໍລິການຮັບສັ່ງສິນຄ້າບໍລິສັດຈະຄິດເງິນປະມານ 20.000 ກີບ/ກິໂລ (1,95 ໂດລາສະຫະລັດ) ເຊິ່ງສູງກ່ວາການສັ່ງເອງຫຼາຍກ່ວາສອງເທົ່າ ແຕ່ບໍລິສັດຜູ້ຮັບສັ່ງແມ່ນມີໜ້າທີ່ຮັບຜິດຊອບ ໃນກໍລະນີສິນຄ້າບໍ່ຖືກຕາມການສັ່ງຊື້,ສິນຄ້າທີ່ສົ່ງຊັກຊ້າ, ສິນຄ້າເປ່ເພ ແລະ ການເຈລະຈາກັບຜູ້ຂາຍຝ່າຍຈີນ. ຂໍ້ມູນທີ່ໄດ້ຮັບຈາກການສາພາດໄດ້ສະແດງຍົກເຖິງເຫັນຈາກຜູ້ຊື້ໂດຍກົງ ແລະ ຜູ້ໃຫ້ບໍລິການສັ່ງຊື້ເຄື່ອງຈາກລະບົບການຄ້າເອເລັກໂຕຣນິກຂອງ ສປ ຈີນ:

*" ...ມີສິນຄ້າຫາຍາກຫຼາຍຢ່າງໃນ Taobao. ຕົວຢ່າງ: ອາໄຫຼ່ລົດແມ່ນມີລາຄາທີ່ແພງຫຼາຍໃນຮ້ານຕົວແທນຈໍາໜ່າຍ. ພວກເຮົາສາມາດສັ່ງອາໄຫລ່ເຫຼົ່ານັ້ນຈາກ Taobao ໃນລາຄາທີ່ສົມເຫດສົມຜົນ. ໂດຍການນໍາໃຊ້ບັດເດບິດ ຫຼືເຄດິດ, ທ່ານສາມາດສັ່ງຊື້ໂດຍກົງຈາກມືຖື; ຂະບວນການຂົນສົ່ງເຄື່ອງຈະບໍ່ເກີນ 2 ອາທິດ ທີ່ຈະມາຮອດບໍລິສັດຂົນສົ່ງໃນປະເທດລາວ..."*

*(ຜູ້ຊື້, ເພດຊາຍ 40 ປີ)*

*" ...ພວກເຮົາໃຫ້ບໍລິການຮັບສັ່ງຊື້ເຄື່ອງຈາກຕະຫຼາດອອນລາຍໃນ ສປ ຈີນ ເຊັ່ນ: Taobao, JD, Tmall, 1688 ແລະ ອື່ນໆ. ລູກຄ້າສາມາດຊໍາລະເງິນສົດໃນການສັ່ງຊື້ສິນຄ້າ; ດ້ວຍຄ່າຂົນສົ່ງເລີ່ມຕົ້ນ 20.000 ກີບ/ກິໂລ (1,95 ໂດລາສະຫະລັດ), ພວກເຮົາຍັງຮັບຜິດຊອບສໍາລັບສິນຄ້າທີ່ບໍ່ຖືກຕາມການສັ່ງຊື້ ແລະ ບັນຫາອື່ນໆ ທີ່ເກີດຂຶ້ນໃນໄລຍະຂະບວນການຂົນສົ່ງ. ການແຜ່ລະບາດຂອງໂຄວິດ-19 ສ້າງຜົນກະທົບທັງດ້ານບວກ ແລະ ດ້ານລົບໃຫ້ບໍລິສັດຂອງພວກເຮົາ. ໃນໄລຍະຂອງການຈໍາກັດການເດີນທາງ, ພວກເຮົາໄດ້ຮັບການສັ່ງຊື້ຫຼາຍຂຶ້ນ. ແນວໃດກໍຕາມ, ພວກເຮົາຍັງໄດ້ຮັບຄໍາຕໍານິຈາກລູກຄ້າຍ້ອນຂະບວນການຂົນສົ່ງທີ່ຊັກຊ້າ. ຄວາມຊັກຊ້າທີ່ເກີດຂຶ້ນແມ່ນມາຈາກຂະບວນການກວດສອບທີ່ເພີ່ມຂຶ້ນ...."*

*(ຜູ້ໃຫ້ບໍລິການຮັບສັ່ງຊື້ເຄື່ອງ, ເພດຊາຍ 33 ປີ)*





**ຂໍ້ສະຫຼຸບ ແລະ ຂໍ້ສະເໜີແນະທາງດ້ານນະໂຍບາຍ**

ເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ນະໂຍບາຍການລ໋ອກດາວເຮັດໃຫ້ຜູ້ຄົນມີຄວາມຕ້ອງການສັ່ງຊື້ສິນຄ້າຈາກແຂວງຕ່າງໆ ແລະ ຕ່າງປະເທດຫຼາຍຂຶ້ນ ໂດຍສະເພາະແມ່ນ ປະເທດໄທ ແລະ ປະເທດຈີນ , ແລະບາງລະບົບໃນການສັ່ງສິນຄ້າຍັງໄດ້ຮັບການປົກປ້ອງຈາກລະບົບການຄ້າເອເລັກໂຕຣນິກຢ່າງເຕັມຮູບແບບ. ຕົວຢ່າງ ພາຍໃຕ້ລະບົບການຄ້າເອເລັກໂຕຣນິກຂອງ Shopee, ໄດ້ມີຄຸນນະສົມບັດໃນການປົກປ້ອງຜູ້ຊື້-ຜູ້ຂາຍ ສໍາລັບການສັ່ງຊື້ ໂດຍການຮັກສາເງິນທີ່ຜູ້ຊື້ໄວ້ໃນລະບົບຈົນກວ່າທາງຜູ້ຊື້ຈະຢືນຢັນ (8). ແນວໃດກໍຕາມ, ຂໍ້ກໍານົດບໍ່ໄດ້ໃຊ້ກັບຜູ້ຊື້ໃນລາວຢ່າງສົມບູນ ຕົວຢ່າງ: ຖ້າມີສິນຄ້າທີ່ສົ່ງມາ ບໍ່ຖືກກັບຜູ້ຊື້ສັ່ງຊື້ໃນນະຄອນຫຼວງວຽງຈັນ, ຄ່າຂົນສົ່ງສິນຄ້າກັບໃຫ້ຜູ້ຂາຍໃນກຸງເທບ ແມ່ນມີລາຄາທີ່ສູງກວ່າລາຄາສິນຄ້າທີ່ຊື້ມາ.

ໃນບົດສຶກສານີ້ເຫັນໄດ້ຜົນກະທົບຂອງການແຜ່ລະບາດພະຍາດ Covid-19, ແຮງງານຈໍານວນຫຼາຍສູນເສຍວຽກຂອງພວກເຂົາເຈົ້າໃນພາກການບໍລິການ, ເຊິ່ງບຸກຄົນເຫຼົ່ານັ້ນໄດ້ເຫັນການຂາຍເຄື່ອງອອນລາຍເປັນທາງອອກໃນການສ້າງວຽກເຮັດງານທໍາ. ການຄ້າເອເລັກໂຕຣນິກພາຍໃນໄດ້ມີການປັບປຸງຢ່າງເຫັນໄດ້ຊັດເຈນ ໂດຍການສະໜັບສະໜູນໃນຮູບແບບຂອງທະນາຄານມືຖື ແລະ ລະບົບການຂົນສົ່ງທີ່ດີຂຶ້ນ. ນອກຈາກນີ້, ຜູ້ຄົນສ່ວນຫຼາຍໃນລາວ ໄດ້ຄົ້ນພົບການຄ້າເອເລັກໂຕຣນິກເປັນທາງເລືອກໜຶ່ງໃນການຊື້ສິ່ງທີ່ພວກເຂົາຕ້ອງການຈາກຕ່າງປະເທດ. ເຖິງຢ່າງໃດກໍຕາມ, ໃນທາງປະຕິບັດຍັງໄດ້ອາໄສການຂົນສົ່ງທີ່ບໍ່ເປັນທາງການ ທີ່ບໍ່ໄດ້ມີລະບົບຕິດຕາມ, ກວດສອບຄືນ ແລະ ການປົກປ້ອງຜູ້ຊື້-ຜູ້ຊົມໃຊ້ຍັງບໍ່ທັນເຮັດໄດ້ດີ.

ກ່ອນການລະບາດຂອງພະຍາດ ໂຄວິດ 19, ສປປ ລາວໄດ້ ມີຄວາມພະຍາຍາມໃນການຈໍາຈັດການນໍາເຂົ້າສິນຄ້າຕິດໂຕຈາກຜຸ້ໂດຍສານຂ້າເຂົ້າຜ່ານທາງ ຂໍ້ກໍານົດສະບັບເລກທີ 2834/ກງ ລົງວັນທີ 30/8/2016 ວ່າດ້ວຍການຈັດເກັບອາກອນ ມູນຄ່າເພີ່ມ ສໍາລັບເຄື່ອງຂອງຕິດໂຕ ຜູ້ໂດຍສານໃນອັດຕາ 10% ຂອງມູນຄ່າເຄື່ອງ ໂດຍບໍ່ເປັນລັກສະນະການຄ້າ, ໃນມູນຄ່າບໍ່ເກີນ 50 ໂດລາສະຫະລັດ, ສ່ວນມູນຄ່າທີ່ເກີນ ຕ້ອງໄດ້ແຈ້ງເສຍອາກອນມູນຄ່າເພີ່ມໃນອັດຕາ 10% (9). ໃນກໍລະນີທີ່ຄ້າຍຄືກັນການສັ່ງສິນຄ້າຮູບແບບເອເລັກໂຕຣນິກຈາກຕ່າງປະເທດແມ່ນ ກໍ່ແມ່ນການນໍາເຂົ້າຮູບການໜຶ່ງ ເຊິ່ງເປັນທາງເລືອກທີ່ດີຕໍ່ຜູ້ບໍລິໂພກ. ແຕ່ເຖິງຢ່າງໃດກໍ່ຕາມ ກິດຈະກໍາການສັ່ງຊື້ສິນຄ້າໂດຍກົງດັ່ງກ່າວມີຜົນກະທົບຕໍ່ລາຍຮັບຂອງລັດຖະບານ ເພາະລະບຽບການໃນການເກັບພາສີ-ອາກອນຈາກສິນຄ້າທີສັ່ງອອນລາຍຈາກຕ່າງປະເທດຍັງຢູ່ໃນຂັ້ນເລີ່ມຕົ້ນ ແລະ ຍັງບໍ່ໄດ້ຮັບຮູ້ກັນກວ້າງຂວາງ. ຕົວຢ່າງ: ສິນຄ້າປະເພດເຄື່ອງໄຟຟ້າມູນຄ່າສູງ ທີ່ສັ່ງໂດຍກົງຈາກຕ່າງປະເທດແມ່ນມີລາຄາທີ່ຖືກກ່ວາສິນຄ້າທີ່ນໍາເຂົ້າໂດຍບໍລິສັດພໍສົມຄວນ, ເຮັດໃຫ້ມີຜົນກະທົບຕໍ່ຫົວໜ່ວຍທຸລະກິດທີ່ນໍາເຂົ້າຕາມລະບຽບການ. ອີງຕາມຜົນການສຶກສາຕົວຈິງໄດ້ມີຄໍາແນະນໍາທາງດ້ານນະໂຍບາຍດັ່ງຕໍ່ໄປນີ້:

- ການພັດທະນາພື້ນຖານໂຄງລ່າງສະໜັບສະໜູນການຄ້າເອເລັກໂຕຣນິກແມ່ນມີຄວາມຈໍາເປັນ ເຊັ່ນ: ການເຊື່ອມຕໍ່ອິນເຕີເນັດ, ການບໍລິການໄປສະນີ, ລະບົບຂົນສົ່ງ ແລະ ປັດໃຈທີ່ກ່ຽວຂ້ອງອື່ນໆ;
- ພາກລັດຈໍາເປັນຕ້ອງສ້າງຄວາມເຊື່ອໝັ້ນໃຫ້ປະຊາຊົນລາວໄດ້ຮັບຮູ້ຄວາມສໍາຄັນ ແລະ ສົ່ງເສີມໃຫ້ມີການເປີດບັນຊີກັບສະຖາບັນທະນາຄານເພື່ອຫັນມາໃຊ້ທະນາຄານເອເລັກໂຕຣນິກແທນການໃຊ້ເງິນສົດ ແລະ ເປັນທ່າແຮງໃຫ້ການພັດທະນາ ລະບົບການຄ້າເອເລັກໂຕຣນິກ;
- ສໍາລັບສັ່ງຊື້ສິນຄ້າໂດຍກົງມາຈາກຕ່າງປະເທດ, ໂດຍສະເພາະແມ່ນຈາກປະເທດໄທ ແລະ ສປ ຈີນ ເນື່ອງຈາກມີການຂາເຂົ້າຈໍານວນຫຼາຍ ແລະ ມີທາອ່ຽງຈະເພີ່ມຂຶ້ນເລື້ອຍໆ. ດັ່ງນັ້ນພັດທະນາລະບຽບການໃນການເກັບພາສີຈາກສິນຄ້າທີສັ່ງອອນລາຍໂດຍກົງຈາກຕ່າງປະເທດໃຫ້ເໝາະສົມເຊັ່ນ: ມີການລະບຸອັດຕາຄ່າຂົນສົ່ງ ແລະ ພາສີຢ່າງລະອຽດເວລາຮັບສິນຄ້າ. ເພື່ອສ້າງລາຍຮັບໃຫ້ແກ່ພາກລັດ ແລະ ເປັນການປົກປ້ອງທຸລະກິດພາຍໃນທີ່ນໍາເຂົ້າທີ່ຖືກຕ້ອງຕາມລະບຽບຫຼັກການ;
- ຈາກຜົນຂອງການຄົ້ນຄ້ວາສາມາດເຫັນໄດ້ວ່າລາຄາຄ່າຂົນສົ່ງຂາອອກຈາກ ສປປ ລາວ ໄປປະເທດໄທ ແລະ ສປ ຈີນ ຍັງເປັນຂໍ້ຈໍາກັດໃນການຂະຫຍາຍໂຕຂອງການຄ້າເອເລັກໂຕຣນິກ. ລັດຖະບານ ສປປ ລາວ ຈໍາເປັນຕ້ອງມີກົນໄກສົ່ງເສີມການສົ່ງສິນຄ້າຂາອອກເພື່ອໃຫ້ມີລາຄາທີ່ຖືກລົງ ແລະ ຊຸກຍູ້ໃຫ້ເກີດການສ້າງພັນທະມິດທາງດ້ານໂລຈິສຕິກລະຫວ່າງບໍລິສັດລາວ-ໄທ ແລະ ລາວ-ຈີນ ເພື່ອສາມາດສົ່ງສິນຄ້າທີ່ມີຕໍານິກັບໄປປະເທດຕົ້ນທາງໄດ້. ນອກຈາກນີ້ຍັງສາມາດສ້າງໂອກາດໃຫ້ແກ່ຜູ້ສະໜອງສິນຄ້າຈາກ ສປປ ລາວ ໄປປະເທດ ດັ່ງກ່າວອີກດ້ວຍ. ນໍາໃຊ້ຂະບວນລົດໄຟ ລາວ - ຈີນ ໃຫ້ເປັນໂອກາດ ແລະ ທ່າແຮງໃນການຂົນສົ່ງສິນຄ້າຕິດພັນກັບການຄ້າເອເລັກໂຕຣນິກ ຈາກ ສປປ ລາວ ໄປ ສປ ຈີນ ໃນລາຄາທີ່ສາມາດແຂ່ງຂັນໄດ້;
- ສໍາລັບນະໂຍບາຍໃນໄລຍະສັ້ນ, ລັດຖະບານຄວນພິຈະລະນາສ້າງກົນໄກເພື່ອຮ່ວມມືກັບລະບົບການຄ້າເອເລັກໂຕຣນິກຂອງປະໄທ ຫຼື ປະເທດເພື່ອບ້ານອື່ນໆ ເພື່ອເຮັດໃຫ້ສາມາດນໍາໃຊ້ບັນຊີຂອງທະນາຄານຢູ່ໃນ ສປປ ລາວໃນການຊື້- ຂາຍສິນຄ້າໄດ້ ນະໂຍບາຍນີ້ຈະສາມາດສ້າງທາງເລືອກທີ່ດີໃຫ້ແກ່ຜູ້ບໍລິໂພກ ແລະ ສ້າງໂອກາດທາງທຸລະກິດໃຫ້ແກ່ຜູ້ສະໜອງສິນຄ້າ;
- ໃນໄລຍະຍາວ, ການສ້າງທ່າແຮງທາງດ້ານການຄ້າເອເລັກໂຕຣນິກຄວນມີການສະໜັບສະໜູນການຮ່ວມມືໃນການພັດທະນາລະບົບການຄ້າອີເລັກໂຕຣນິກກັບບັນດາປະເທດເພື່ອນບ້ານໃນຂອບເຂດການຮ່ວມມືໂດຍເລີ່ມຈາກຄູ່ຄ້າສໍາຄັນກ່ອນເຊັ່ນ: ປະເທດໄທ





ແລະ ສປ ຈີນ, ຕາມມາດ້ວຍ ກຸ່ມປະເທດ ອາຊຽນ, ກຸ່ມປະເທດ ກຳປູເຈຍ - ລາວ - ມຽນມາ - ຫວຽດນາມ (CLMV), ຂອບການຮ່ວມມືດ້ານເສດຖະກິດແມ່ນ້ຳອີຣະວະດີ - ແມ່ນ້ຳເຈົ້າພະຍາ - ແມ່ນ້ຳຂອງ (ACMECS), ລ້ານຊ້າງ - ແມ່ຂອງ (LMC), ເຂດການຄ້າເສລີອາຊຽນ-ຮົງກົງ (AHKFTA) ແລະ ອື່ນໆ;

- ການພັດທະນາລະບຽບການກ່ຽວກັບການຄ້າເອເລັກໂຕຣນິກຕາມທິດທາງຂອງການກຳນົດແຜນງານຮ່ວມກັນດ້ານເສດຖະ ກິດຂອງອາຊຽນເຖິງປີ 2025 (ASEAN Economic Community Blueprint 2025) ແລະ ແຜນງານດ້ານການຄ້າເອເລັກໂຕຣນິກອາຊຽນ ໃນປີ 2017-2025 ແມ່ນຕ້ອງໄດ້ຮັບການເອົາໃຈໃສ່ໃຫ້ສາມາດຈັດຕັ້ງປະຕິບັດໄດ້ຫຼາຍຂຶ້ນ.

ການສຶກສາຄັ້ງນີ້ແມ່ນໄດ້ອີງໃສ່ການເກັບຂໍ້ມູນແບບສຳພາດເຈາະຈິງຈາກຜູ້ມີສ່ວນຮ່ວມ (In-depth interview) ເຊັ່ນ: ຜູ້ຊື້, ບໍລິສັດຂົນສົ່ງ ແລະ ຜູ້ໃຫ້ບໍລິການຮັບສັ່ງຊື້ເຄື່ອງ ໃນນະຄອນຫຼວງວຽງຈັນ. ໃນໂອກາດນີ້, ຂໍ້ແນະນຳການສຶກສາໃນອານາຄົດ ຄວນລົງເລິກການເກັບຂໍ້ມູນແບບປະລິມານ (Case Study Survey), ການວິເຄາະທາງສະຖິຕິ ແລະ ການສຶກສາທີ່ຄອບຄຸມທາງພູມສາດທີ່ຫຼາຍຂຶ້ນ.

## ເອກະສານອ້າງອີງ


1. Leebouapao L, Sitthideth P, Douangpaseuth K, Suhud Y. E-Commerce Development in the Lao PDR: Some Policy Concerns. In: Chen L, Kimura F, editors. E-commerce Connectivity in ASEAN. Jakarta, Indonesia: Economic Research Institute for ASEAN and East Asia; 2020.

2. World Bank. Mobile cellular subscriptions (per 100 people) - Lao PDR, Thailand, Vietnam, Singapore, Brunei Darussalam, Myanmar, Cambodia, Philippines, Indonesia, Malaysia: The World Bank; 2021 [Available from: https://data.worldbank.org/indicator/IT.CEL.SETS.P2?end=2019&locations=LA-TH-VN-SG-BN-MM-KH-PH-ID-MY&start=2019.

3. World Bank. Account ownership at a financial institution or with a mobile-money-service provider, richest 60% (% of population ages 15+) - Lao PDR, Myanmar, Cambodia, Thailand, Vietnam, Philippines, Indonesia, Singapore, Malaysia: The World Bank; 2018 [

4. Global Findex. The Global Findex Database 2017. 2017.

5. World Bank. Country Score Card: Lao PDR 2018: The World Bank; 2018 [Available from: https://lpi.worldbank.org/international/scorecard/line/2/C/LAO/2018/C/KHM/2007/C/MMR/2018/C/BRN/2018/C/IDN/2018/C/MMR/2018/C/SGP/2018/C/THA/2018/C/VNM/2018/C/PHL/2018#chartarea.

6. OECD. OECD Policy Responses to Coronavirus (COVID-19) - E-commerce in the time of COVID-19: Organisation for Economic Co-operation and Development; 2020 [Available from: https://www.oecd.org/coronavirus/policy-responses/e-commerce-in-the-time-of-covid-19-3a2b78e8/.

7. MOIC. Ecommerce related regislation Vientiane capital, Laos: Ministry of Industry and Commerce; 2021 [Available from: https://laotradeportal.gov.la/?r=site/display&id=1714.

8. Shopee. Shopee Guarantee: Shopee; 2021 [Available from: https://seller.shopee.ph/edu/article/1137.

9. ກະຊວງການເງິນ. ຂໍ້ກຳນົດສະບັບເລກທີ 2834/ກງ ວ່າດ້ວຍການຈັດເກັບອາກອນ ມູນຄ່າເພີ່ມ ສຳລັບເຄື່ອງຂອງຕິດຕົວ ຜູ້ໂດຍສານໃນອັດຕາ 10% ຂອງມູນຄ່າເຄື່ອງ. ນະຄອນຫຼວງວຽງຈັນ: ກະຊວງການເງິນ; 2016.


**ທ່ານສາມາດ ດາວໂຫຼດເອກະສານຕາມ QR Code ຫຼື Link:**

**shorturl.at/quwl3**